ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ພະແນກການເງິນ

ຂາເຂົ້າ | ສຳນັກງານອົງການປົກຄອງ ນວ | ໜ່ວຍງານບໍລິການປະຕູດຽວ
ເລກທີ: 3826
ວັນທີ: 22-8-24

484 ...
ເລກທີ............./ກງ.ນວ

ວັນທີ 19 AUG 2024

## ໜັງສືລາຍງານ

**ຮຽນ :** ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ທີ່ເຄົາລົບນັບຖືຢ່າງສູງ.

**ເລື່ອງ :** ຂໍງົບປະມານຈັດຊື້ທະນູບ່າ ໃຫ້ນາຍບ້ານ ແລະ ຮອງນາຍບ້ານ 481 ບ້ານ, 9 ຕົວເມືອງ ທົ່ວນະຄອນຫຼວງວຽງຈັນ

- ອີງຕາມ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 71/ສພຊ ລົງວັນທີ 16 ທັນວາ2015.
- ອີງຕາມ ຂໍ້ຕົກລົງຂອງ ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກການເງິນ ນະຄອນຫຼວງວຽງຈັນ ສະບັບ ເລກທີ 193/ຈນວ, ລົງວັນທີ 22 ກຸມພາ 2023.
- ອີງຕາມ ໜັງສືທາງລັດຖະການຂອງຫ້ອງວ່າການນະຄອນຫຼວງວຽງຈັນ ສະບັບເລກທີ 1310/ຫວນວ, ລົງວັນທີ26 ກໍລະກົດ 2024
- ອີງຕາມ ໜັງສືສະເໜີ ຂອງ ພະແນກພາຍໃນນະຄອນຫຼວງວຽງຈັນ ເລກທີ 1137/ພນນວ ລົງວັນທີ 15 ກໍລະກົດ 2024.
- ອີງຕາມ ໜັງສືລາຍງານຂອງຂະແໜງງົບປະມານແຫ່ງລັດ ສະບັບເລກທີ 120/8ໜງລ.ນວ,ລົງວັນທີ 06 ສິງຫາ 2024.

ພະແນກການເງິນນະຄອນຫຼວງວຽງຈັນ ຂໍຖືເປັນກຽດຢ່າງສູງຮຽນລາຍງານມາຍັງ ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ຊາບກ່ຽວກັບ ຂໍງົບປະມານຈັດຊື້ທະນູບ່າ ໃຫ້ນາຍບ້ານ ແລະ ຮອງນາຍບ້ານ ດັ່ງກ່າວ ລວມທັງໝົດ 2,405 ຄົນ, ໃນນີ້ເປັນຍິງ: 581 ຄົນ, ລວມເປັນງົບປະມານທັງໝົດ: 414,862,500 ກີບ. ຜ່ານການຄົ້ນຄ້ວາ ແຜນງົບປະມານວຽກດັ່ງກ່າວ ໂດຍອີງຕາມ ມະຕິກອງປະຊຸມອົງການປົກຄອງນະຄອນຫຼວງວຽງຈັນຄັ້ງທີ 28(ຄັ້ງວັນທີ 28 ກັນຍາ 2023), ເພື່ອຈັດຕັ້ງປະຕິບັດວຽກງານ ໃຫ້ມີຜົນສຳເລັດຕາມລະດັບຄາດໝາຍ. ໂດຍອີງຕາມທິດຊີ້ນຳຂອງຂັ້ນເທິງ ແລະ ແຜນງົບປະມານຂອງນະຄອນຫຼວງວຽງຈັນປີ 2024 ມີຈຳກັດ ແລະ ຈັດສັນໝົດແລ້ວ. ສະເໜີ ຂັ້ນເທິງພິຈາລະນາເງິນເກີນແຜນປີ 2022 ບ້ວງພັດທະນານະຄອນຫຼວງວຽງຈັນ(25%) ຈຳນວນ 214,000,000 ກີບ ນຳໃຊ້ເຂົ້າໃນວຽກດັ່ງກ່າວ ແລະ ພິຈາລະນາອອກຂໍ້ຕົກລົງເຈົ້າຄອງນະຄອນຫຼວງວຽງຈັນ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ໃຫ້ສອດຄ່ອງຕາມລະບຽບການ, ສ່ວນງົບປະມານຍັງບໍ່ພຽງພໍ ສະເໜີພະແນກພາຍໃນນະຄອນຫຼວງວຽງຈັນ ສົມທົບກັບອົງການປົກຄອງເມືອງທີ່ກ່ຽວຂ້ອງ ໃນການຈັດສັນ ງົບປະມານເງິນເກີນແຜນປີ 2023 ຂອງຕົນ ເຂົ້າໃນວຽກງານດັ່ງກ່າວ ຕາມມະຕິຂອງຂັ້ນເທິງ.

ດັ່ງນັ້ນ, ຮຽນລາຍງານມາຍັງ ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ເພື່ອຊາບ ແລະ ທິດຊີ້ນຳຕາມເຫັນສົມຄວນ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ຫົວໜ້າພະແນກການເງິນ

ກະຊວງການເງິນ | ພະແນກ ການເງິນ | ນະຄອນຫຼວງວຽງຈັນ

ວຽງສາລີ ອິນທະພົມ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ເລກທີ………/ຈນວ

ວັນທີ………………

# ຂໍ້ຕົກລົງ

## ວ່າດ້ວຍການອະນຸມັດຈ່າຍເງິນເກີນແຜນປີ 2022 ບ້ວງພັດທະນານະຄອນຫຼວງວຽງຈັນ(25%)

- ອີງຕາມ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 71/ສພຊ ລົງວັນທີ 16 ທັນວາ2015.
- ອີງຕາມ ມາດຕາ 19, 20 ໝວດທີ IV ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.
- ອີງຕາມ ມະຕິກອງປະຊຸມ ອົງການປົກຄອງນະຄອນຫຼວງວຽງຈັນ ຄັ້ງທີ 28( ຄັ້ງວັນທີ 28 ກັນຍາ 2023) ສະບັບເລກທີ 10/ອປຄ.ນວ, ລົງວັນທີ 3 ຕຸລາ 2023.
- ອີງຕາມ ໜັງສືລາຍງານ ຂອງພະແນກການເງິນນະຄອນຫຼວງວຽງຈັນ ສະບັບເລກທີ 484/ກງ.ນວ, ລົງວັນທີ 19 ສິງຫາ 2024.

### ເຈົ້າຄອງນະຄອນຫຼວງວຽງຈັນ ອອກຂໍ້ຕົກລົງ :

**ມາດຕາ 1** ເຫັນດີອະນຸມັດງົບປະມານບ້ວງເງິນເກີນແຜນປີ 2022 ຈຳນວນເງິນ **214,000,000 ກີບ (ສອງຮ້ອຍສິບສີ່ລ້ານກີບ)** ເພື່ອສົມທົບຈັດຊື້ທະນູບ່າ ໃຫ້ນາຍບ້ານ ແລະ ຮອງນາຍບ້ານ 481 ບ້ານ, 9 ຕົວເມືອງທົ່ວນະຄອນຫຼວງວຽງຈັນ.

**ມາດຕາ 2** ສຳລັບງົບປະມານ ແມ່ນນຳໃຊ້ເງິນເກີນແຜນປີ 2022 ຮ່ວງພັດທະນານະຄອນຫຼວງວຽງຈັນ(25%).

**ມາດຕາ 3** ມອບໃຫ້ຫ້ອງວ່າການນະຄອນຫຼວງວຽງຈັນ, ພະແນກການເງິນນະຄອນຫຼວງວຽງຈັນ, ພະແນກພາຍໃນນະຄອນຫຼວງວຽງຈັນ ພ້ອມທັງພາກສ່ວນກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມລະບຽບການທີ່ກ່ຽວຂ້ອງຮັບປະກັນຄວາມຖືກຕ້ອງ ແລະ ສອດຄ່ອງຕາມລະບຽບກົດໝາຍ.

**ມາດຕາ 4** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຈົ້າຄອງນະຄອນຫຼວງວຽງຈັນ

ບ່ອນສົ່ງ:

- ເຈົ້າຄອງ, ຮອງເຈົ້າຄອງ ນະຄອນຫຼວງວຽງຈັນ, ທ່ານລະ 01 ສະບັບ
- ຫ້ອງວ່າການ ນະຄອນຫຼວງວຽງຈັນ 01 ສະບັບ
- ພະແນກການເງິນ ນະຄອນຫຼວງວຽງຈັນ 01 ສະບັບ
- ບ່ອນກ່ຽວຂ້ອງ 01 ສະບັບ
- ສຳເນົາ 01 ສະບັບ